ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 30428 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 18/12/2020

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງທາງດ່ວນສຳປະທານ ນະຄອນຫຼວງວຽງຈັນ-ວັງວຽງ

- ອີງຕາມ ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງ ສະບັບເລກທີ 021/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017;
- ອີງຕາມ ສັນຍາສຳປະທານໂຄງການທາງດ່ວນ ນະຄອນຫຼວງວຽງຈັນ ຫາ ວັງວຽງ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດຮ່ວມທຶນພັດທະນາ ທາງດ່ວນ ລາວ-ຈີນ ຈຳກັດ ສະບັບລົງວັນທີ 04 ເມສາ 2018;
- ອີງຕາມ ໜັງສືສະເໜີຂອງ ກົມນິຕິກຳ ສະບັບເລກທີ 340/ຍທຂ.ກນກ, ລົງວັນທີ 26 ພະຈິກ 2020.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານທາງດ່ວນສຳປະທານ ນະຄອນຫຼວງວຽງຈັນ-ວັງວຽງ ເພື່ອຮັບປະກັນໃຫ້ການນຳໃຊ້ ແລະ ການຈະລາຈອນຕາມທາງດ່ວນ ໃຫ້ມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ແນໃສ່ ຫຼຸດຜ່ອນອຸບປະຕິເຫດ, ປົກປ້ອງຊີວິດ, ຊັບສິນຂອງ ບຸກຄົນ, ນິຕິບຸກຄົນ, ຜູ້ສຳປະທານ ແລະ ສາທາລະນະ, ສາມາດ ເຊື່ອມຈອດ ກັບຕາໜ່າງທາງຫຼວງ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຄຸ້ມຄອງທາງດ່ວນສຳປະທານ ນະຄອນຫຼວງວຽງຈັນ-ວັງວຽງ**

ການຄຸ້ມຄອງທາງດ່ວນສຳປະທານ ນະຄອນຫຼວງວຽງຈັນ-ວັງວຽງ ແມ່ນການອຳນວຍຄວາມສະດວກ, ຄວບຄຸມ, ຕິດຕາມ ກວດກາ, ການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ, ການຕິດຕັ້ງ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ, ການ ນຳໃຊ້, ຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ຕາມທາງດ່ວນ ສຳປະທານ ນະຄອນຫຼວງວຽງຈັນ-ວັງວຽງ ໃນແຕ່ລະໄລຍະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທາງດ່ວນ** ໝາຍເຖິງ ທາງທີ່ຍານພາຫະນະ ສາມາດແລ່ນດ້ວຍຄວາມໄວສູງຕະຫຼອດຊ່ວງທາງດັ່ງກ່າວ, ເປັນທາງແບບປິດ ໂດຍບໍ່ມີທາງຕັດ ຫຼື ທາງຄົບ ໃນລະດັບດຽວກັນ ລະຫວ່າງສະຖານີເກັບເງິນຄ່າຜ່ານທາງ, ມີການແບ່ງຊ່ອງຈະລາຈອນ ແລະ ມີສອງທິດທາງ ໄປ-ກັບ ແຍກກັນ ຊຶ່ງມີການ ຄວບຄຸມ ແລະ ກຳນົດຈຸດໃຫ້ຍານພາຫະນະ ເຂົ້າ-ອອກ ໂດຍມີການເກັບເງິນຄ່າຜ່ານທາງດ່ວນ ຢູ່ສະຖານີປາຍທາງ;

2. **ສຳປະທານ** ໝາຍເຖິງ ລັດອະນຸຍາດໃຫ້ຜູ້ສຳປະທານລົງທຶນພັດທະນາທາງດ່ວນ ໃນຮູບແບບ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT) ໂດຍມີເງື່ອນໄຂ ແລະ ກຳນົດເວລາ ຕາມສັນຍາສຳປະທານ;

3. **ຜູ້ສຳປະທານ** ໝາຍເຖິງ ບໍລິສັດຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ ຈຳກັດ;

4. **ຈຸດພັກລົດ** ໝາຍເຖິງ ສະຖານທີ່ພັກຊົ່ວຄາວ ທີ່ຈັດສັນໄວ້ຕາມທາງດ່ວນ ເພື່ອອຳນວຍຄວາມສະດວກໃຫ້ແກ່ ຜູ້ຂັບຂີ່, ຜູ້ເດີນທາງ ໄດ້ພັກຜ່ອນ ແລະ ກວດກາ ຍານພາຫະນະຂອງຕົນໃນເວລາເດີນທາງ;

5. **ອຸໂມງ** ໝາຍເຖິງ ທາງຈະລາຈອນຂອງຍານພາຫະນະທີ່ຂຸດເຈາະຜ່ານໜ່ວຍພູ, ມີປາກອຸໂມງເປີດທັງສອງດ້ານ, ມີການຕິດຕັ້ງລະບົບ ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ລະບາຍນ້ຳ ແລະ ສິ່ງປ້ອງກັນຄວາມປອດໄພ ຢ່າງຄົບຖ້ວນ;

6. **ຂົວຂ້າມທາງດ່ວນ** ໝາຍເຖິງ ຂົວທີ່ສ້າງຂຶ້ນເພື່ອຂ້າມຜ່ານທາງດ່ວນ ຊຶ່ງໃຊ້ເປັນທາງຄົນຍ່າງ ຫຼື ທາງລົດ ທີ່ສາມາດຮັບປະກັນຄວາມປອດໄພຂອງ ຄົນ ແລະ ຍານພາຫະນະ;

7. **ທາງຍ່າງໃຕ້ດິນ** ໝາຍເຖິງ ທາງໃຕ້ດິນທີ່ລອດກ້ອງທາງດ່ວນ ແລະ ມີການເຊື່ອມຕໍ່ລະຫວ່າງອາຄານຂອງຈຸດພັກລົດ ແລະ ຈຸດອື່ນຢູ່ສອງຂ້າງຂອງທາງດ່ວນ;

8. **ເຈົ້າໜ້າທີ່ທາງດ່ວນ** ໝາຍເຖິງ ຜູ້ທີ່ຖືກແຕ່ງຕັ້ງ ຫຼື ມອບໝາຍໂດຍ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ປະຕິບັດໜ້າທີ່ໃນການຕິດຕາມ ກວດກາ ວຽກງານທາງດ່ວນ.

**ມາດຕາ 4 ຫຼັກການກ່ຽວກັບການຄຸ້ມຄອງວຽກງານທາງດ່ວນ**

ການຄຸ້ມຄອງວຽກງານທາງດ່ວນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບ ສັນຍາສຳປະທານທາງດ່ວນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຮັບປະກັນໃຫ້ການຈະລາຈອນ ມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ, ເປັນລະບຽບຮຽບຮ້ອຍ ແລະ ສາມາດເຊື່ອມຈອດກັບຕາໜ່າງຂອງທາງຫຼວງ;

3. ຮັບປະກັນຍານພາຫະນະທີ່ນຳໃຊ້ຕາມທາງດ່ວນໃຫ້ໄດ້ມາດຕະຖານເຕັກນິກທີ່ກຳນົດໄວ້;

4. ປະຕິບັດກົດຈະລາຈອນຕາມທາງດ່ວນ ຢ່າງເຂັ້ມງວດ;

5. ຮັບປະກັນ ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນໃຫ້ຢູ່ໃນສະພາບດີຕະຫຼອດເວລາ;

6. ຮັບປະກັນການມີສ່ວນຮ່ວມຂອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ, ຜູ້ນຳໃຊ້ທາງດ່ວນ ແລະ ປະຊາຊົນ ເຂົ້າໃນການປົກປັກຮັກສາ ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນ ແລະ ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ມີການ ລັກລອບ, ມ້າງເພທຳລາຍ ຫຼື ຄອບຄອງ ນອກຈາກຜູ້ສຳປະທານ.

**ມາດຕາ 5 ພັນທະຂອງຜູ້ນຳໃຊ້ທາງດ່ວນ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ນຳໃຊ້ຍານພາຫະນະຕາມທາງດ່ວນ ແລະ ພື້ນທີ່ສະຫງວນຂອງທາງດ່ວນ ຕ້ອງປະກອບສ່ວນປົກປັກຮັກສາ ແລະ ບູລະນະຮັກສາ ໂຄງລ່າງ

ພື້ນຖານ ແລະ ສິ່ງອໍານວຍຄວາມສະດວກດ້ານການຈະລາຈອນຕາມທາງດ່ວນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 6 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ ພົວພັນ, ເຄື່ອນໄຫວ ແລະ ນໍາໃຊ້ທາງດ່ວນ ນະຄອນຫຼວງວຽງຈັນ ຫາ ວັງວຽງ ແຂວງວຽງຈັນ.

## ໝວດທີ 2
## ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນ

**ມາດຕາ 7 ໂຄງປະກອບຂອງທາງດ່ວນ**

ໂຄງປະກອບຂອງທາງດ່ວນປະກອບດ້ວຍ ໂຄງສ້າງຂອງທາງ, ພື້ນທາງ, ໜ້າທາງ, ບ່າທາງ, ຂົວທາງດ່ວນ, ຂົວຂ້າມທາງດ່ວນ, ອຸໂມງ, ລະບົບລະບາຍນໍ້າ, ຕະລິ່ງທາງ, ຝາກັ້ນດິນ, ກໍາແພງຕ້ານເຈື່ອນ, ທາງຍ່າງໃຕ້ດິນ, ຈຸດພັກລົດ, ເຂດຂຽວ, ຮົ້ວ ແລະ ອື່ນໆ.

ໂຄງປະກອບທາງດ່ວນ ແມ່ນໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍບໍ່ອະນຸຍາດ ມີການລັກລອບ, ມ້າງເພທໍາລາຍ, ຊຶ່ງບຸກຄົນອື່ນບໍ່ມີສິດຄອບຄອງ ນອກຈາກຜູ້ສໍາປະທານ.

**ມາດຕາ 8 ສິ່ງປະກອບຂອງທາງດ່ວນ**

ສິ່ງປະກອບຂອງທາງດ່ວນ ແມ່ນວັດຖຸປະກອນທີ່ຕິດຕັ້ງໃສ່ທາງດ່ວນ ເພື່ອອໍານວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ນໍາໃຊ້ທາງດ່ວນ ເຊັ່ນ ລະບົບ ປ້ອງກັນ ບຸກຄົນ ແລະ ຍານພາຫະນະຂຶ້ນທາງດ່ວນ, ລະບົບ ໄຟຟ້າ, ແສງສະຫວ່າງ, ໂທລະຄົມມະນາຄົມ ແລະ ການສື່ສານ, ລະບົບ ລະບາຍນໍ້າ, ບໍາລຸງຮັກສາ, ການຄຸ້ມຄອງ ແລະ ການບໍລິການ, ລະບົບ ກ້ອງວົງຈອນປິດ, ຄວາມປອດໄພໃນການຈະລາຈອນ, ສິ່ງກໍ່ສ້າງສະເພາະ, ສິ່ງປຸກສ້າງ ໄຟສັນຍານ, ປ້າຍ, ເຄື່ອງໝາຍ ຈະລາຈອນ ແລະ ສິ່ງອໍານວຍຄວາມສະດວກອື່ນໆ, ຊຶ່ງປະກອບ ແລະ ຕິດຕັ້ງຕາມການອອກແບບ ເພື່ອຮັບປະກັນຄວາມ ປອດໄພ, ສະດວກໃນການຈະລາຈອນ, ດໍາເນີນການ ຕິດຕາມ ກວດກາ ແລະ ກວດສອບດ້ານຄວາມປອດໄພ ຢ່າງເປັນປົກກະຕິຕາມມາດຕະຖານເຕັກນິກຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ກໍານົດ.

**ມາດຕາ 9 ສິ່ງປ້ອງກັນຄວາມປອດໄພຂອງທາງດ່ວນ**

ສິ່ງປ້ອງກັນຄວາມປອດໄພຂອງທາງດ່ວນ ແມ່ນວັດຖຸປະກອນ ທີ່ສ້າງຂຶ້ນ ແລະ ຕິດຕັ້ງ ເພື່ອປ້ອງກັນການເກີດອຸບປະຕິເຫດ, ຕ້ານ ແລະ ສະກັດກັ້ນອັກຄີໄພ, ໄພອັນຕະລາຍໃນການຈະລາຈອນ ຕໍ່ຜູ້ນໍາໃຊ້ທາງດ່ວນ ແລະ ຍານພາຫະນະ.

## ໝວດທີ 3
## ຂອບເຂດຂອງທາງດ່ວນ

**ມາດຕາ 10 ຂອບເຂດຂອງທາງດ່ວນ**

ຂອບເຂດຂອງທາງດ່ວນ ແມ່ນພື້ນທີ່ທັງໝົດຂອງທາງດ່ວນ ຢູ່ ເທິງ, ລຸ່ມ ແລະ ສອງຂ້າງ ທີ່ກໍານົດໄວ້ໃນໃບຕາດິນ ຊຶ່ງປະກອບມີ ທາງດ່ວນ, ເຂດສະຫງວນ, ຂົວຂ້າມທາງດ່ວນສໍາລັບ ເຂົ້າ-ອອກ, ທາງລອດພື້ນ ແລະ ຈຸດພັກລົດ ຊຶ່ງລາຍລະອຽດແມ່ນໄດ້ກໍານົດໄວ້ໃນສັນຍາສໍາປະທານ.

**ມາດຕາ 11 ພື້ນທີ່ສະຫງວນທາງດ່ວນ**

ພື້ນທີ່ສະຫງວນທາງດ່ວນຢູ່ໜ້າດິນ ແມ່ນຂອບເຂດພື້ນທີ່ຕາມທີ່ໄດ້ກໍານົດໄວ້ໃນສັນຍາສໍາປະທານ ຊຶ່ງສະຫງວນໄວ້ເພື່ອກໍ່ສ້າງ, ດັດປັບແລວທາງ ລວມທັງການຂະຫຍາຍກິດຈະການຕ່າງໆ ຂອງທາງດ່ວນ

ໃນອະນາຄົດ. ພ້ອມນັ້ນ ການກຳນົດພື້ນທີ່ສະຫງວນດັ່ງກ່າວຍັງໃຫ້ອີງຕາມຄວາມຈຳເປັນທາງດ້ານມາດຕະຖານເຕັກນິກ ເພື່ອຮັບປະກັນຄວາມປອດໄພ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງມີລາຍລະອຽດດັ່ງນີ້:

1. ພື້ນທີ່ສະຫງວນທາງດ່ວນ ຢູ່ເທິງໜ້າດິນຂອງທາງດ່ວນ, ຂົວ ແລະ ອຸໂມງ ມີລວງສູງ ນັບແຕ່ໜ້າທາງຕາມແນວຕັ້ງຕໍ່າສຸດ 5 ແມັດ;

2. ພື້ນທີ່ສະຫງວນທາງດ່ວນ ຢູ່ໃຕ້ດິນ ແມ່ນສະຫງວນໄວ້ເພື່ອປ້ອງກັນຄວາມປອດໄພ ແລະ ກິດຈະການໃດໜຶ່ງຢູ່ໃຕ້ພື້ນທາງດ່ວນ ເຊັ່ນ ທາງຍ່າງລອດໃຕ້ດິນ, ວາງທໍ່ນ້ຳປະປາ, ສາຍໂທລະຄົມມະນາຄົມ ແລະ ການສື່ສານ, ສາຍໄຟຟ້າ, ທໍ່ສົ່ງອາຍແກັສ ຫຼື ນ້ຳມັນ;

3. ພື້ນທີ່ສະຫງວນທາງດ່ວນ ຢູ່ເທິງໜ້ານ້ຳ ແມ່ນສະຫງວນຈາກຂອບນອກສຸດຂອງໂຄງສ້າງຂົວທາງດ່ວນ ເພື່ອປ້ອງກັນຄວາມປອດໄພ ບໍ່ໃຫ້ມີການກໍ່ສ້າງ ແລະ ຂຸດຄົ້ນ ແຮ່ທາດ ຫຼື ວັດສະດຸກໍ່ສ້າງຕ່າງໆ;

4. ພື້ນທີ່ສະຫງວນຂອງຂົວທາງດ່ວນ ດ້ານເໜືອນ້ຳໄຫຼ ແລະ ລຸ່ມນ້ຳໄຫຼ ແມ່ນຫ້າມດຳເນີນທຸກກິດຈະການ ເປັນຕົ້ນ ດູດແຮ່ທາດ, ຖົມດິນໃສ່ແມ່ນ້ຳ, ຕັນແມ່ນ້ຳ, ຕິດຕັ້ງຂົວລອຍ ຫຼື ສິ່ງອຳນວຍຄວາມສະດວກອື່ນ ທີ່ເປັນອັນຕະລາຍຕໍ່ຄວາມປອດໄພຂອງຂົວທາງດ່ວນ. ສຳລັບຂົວທາງດ່ວນທີ່ມີຄວາມຍາວຫຼາຍກວ່າ 100 ແມັດ ແມ່ນກຳນົດເອົາ 250 ແມັດ ດ້ານເໜືອນ້ຳໄຫຼ ແລະ 1000 ແມັດ ດ້ານລຸ່ມນ້ຳໄຫຼ ແລະ ຂົວທາງດ່ວນ ທີ່ມີຄວາມຍາວໜ້ອຍກວ່າ 100 ແມັດ ແມ່ນກຳນົດເອົາ 250 ແມັດ ດ້ານເໜືອນ້ຳໄຫຼ ແລະ 500 ແມັດ ດ້ານລຸ່ມນ້ຳໄຫຼ.

**ມາດຕາ 12 ການນຳໃຊ້ພື້ນທີ່ໃນຂອບເຂດຂອງທາງດ່ວນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນກິດຈະການໃດໜຶ່ງ ໃນຂອບເຂດທາງດ່ວນ ຕ້ອງໄດ້ຮັບການອະນຸຍາດຈາກຜູ້ສຳປະທານທາງດ່ວນເສຍກ່ອນ ແລ້ວນຳສະເໜີຕໍ່ອົງການຄຸ້ມຄອງວຽກງານທາງດ່ວນ ເພື່ອພິຈາລະນາ.

ໃນກໍລະນີບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍໃຫ້ທາງດ່ວນ ຕ້ອງສ້ອມແປງ, ປັບປຸງ ຫຼື ທົດແທນຄ່າເສຍຫາຍທາງແພ່ງ ໂດຍອີງຕາມມາດຕະຖານເຕັກນິກທີ່ກໍ່ສ້າງເບື້ອງຕົ້ນ.

## ໝວດທີ 4
## ລະບຽບການນຳໃຊ້ທາງດ່ວນ

**ມາດຕາ 13 ຈຸດເຂົ້າ-ອອກທາງດ່ວນ**

ທາງດ່ວນ ນະຄອນຫຼວງວຽງຈັນ-ວັງວຽງ ແຕ່ບ້ານສີເກີດ (ກມ 0+000) ຫາ ຈຸດເຊື່ອມຕໍ່ທາງດ່ວນຊ່ວງທີ 2 (ວັງວຽງ-ຫຼວງພະບາງ) ມີລວງຍາວ 109,11 ກິໂລແມັດ, ມີທາງເຊື່ອມຕໍ່ກັບທາງຫຼວງແຫ່ງຊາດຈຳນວນ ເຈັດ ເສັ້ນ ມີລວງຍາວທັງໝົດ 18,99 ກິໂລແມັດ ແລະ ມີສະຖານນີເກັບເງິນຄ່າຜ່ານທາງດ່ວນຈຳນວນ ແປດ ຈຸດ ໂດຍມີ ສາມຈຸດ ຢູ່ນະຄອນຫຼວງວຽງຈັນ ແລະ ຫ້າຈຸດ ຢູ່ແຂວງວຽງຈັນ ດັ່ງນີ້:

1. ສະຖານີເກັບເງິນນະຄອນຫຼວງວຽງຈັນ;
2. ສະຖານີເກັບເງິນນາຊອນ;
3. ສະຖານີເກັບເງິນບ້ານບົວ;
4. ສະຖານີເກັບເງິນໂພນຄຳ;
5. ສະຖານີເກັບເງິນໂພນໂຮງ;
6. ສະຖານີເກັບເງິນຫີນເຫີບ;
7. ສະຖານີເກັບເງິນນ້ຳງື່ມ;
8. ສະຖານີເກັບເງິນວັງວຽງ.

**ມາດຕາ 14 ທິດທາງ ແລະ ຊ່ອງຈະລາຈອນຕາມທາງດ່ວນ**

ທິດທາງການຈະລາຈອນຕາມທາງດ່ວນ ແບ່ງອອກເປັນ ສອງ ທິດທາງ ໄປ ແລະ ກັບ ຊຶ່ງມີດອນກາງທີ່ໃຊ້ແບ່ງການຈະລາຈອນ.

ທາງດ່ວນມີ ສອງ ຊ່ອງຈະລາຈອນ ແລະ ບ່າທາງ ສໍາລັບແຕ່ລະທິດທາງ ໄປ ແລະ ກັບ, ຊ່ອງຊ້າຍ ແມ່ນຊ່ອງຈະລາຈອນສໍາລັບຊີງຂຶ້ນໜ້າ, ຊ່ອງຂວາ ແມ່ນຊ່ອງຈະລາຈອນປົກກະຕິ, ສ່ວນບ່າທາງ ແມ່ນຢູ່ເບື້ອງຂວາຂອງຊ່ອງຈະລາຈອນປົກກະຕິ ທີ່ໃຊ້ສໍາລັບກຽມ ເຂົ້າ ຫຼື ອອກ ທາງດ່ວນ ແລະ ຈອດຍານພາຫະນະສຸກເສີນ.

**ມາດຕາ 15 ການຂັບຂີ່ຍານພາຫະນະຕາມທາງດ່ວນ**

ການຂັບຂີ່ຍານພາຫະນະຕາມທາງດ່ວນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຍານພະຫະນະທີ່ເຂົ້າໄປໃນທາງດ່ວນຕ້ອງມີປ້າຍສັນຍາລັກເຕືອນເພື່ອນໍາໃຊ້ໃນເວລາຍານພາຫະນະເກີດມີການຕິດຂັດ ຫຼື ເປ່ເພ;
2. ຜູ້ຂັບຂີ່ຍານພາຫະນະ ແລະ ຜູ້ໂດຍສານທີ່ນໍາໃຊ້ທາງດ່ວນຕ້ອງໃສ່ສາຍຮັດນິລະໄພ;
3. ໃນເວລາທີ່ຍານພະຫະນະກໍາລັງຂັບເຄື່ອນ, ແມ່ນບໍ່ອະນຸຍາດໃຫ້ຜູ້ໂດຍສານຢືນ ຫຼື ຖິ້ມສິ່ງຂອງອອກຈາກຍານພາຫະນະ;
4. ໃນເວລາທີ່ຍານພະຫະນະກໍາລັງຂົນສົ່ງສິນຄ້າ ຫຼື ສິ່ງຂອງຕ່າງໆ ອະນຸຍາດໃຫ້ຜູ້ຂັບຂີ່ ແລະ ຜູ້ຊ່ວຍ ນັ່ງຕາມຈໍານວນຕັ່ງທີ່ມີໃນຫ້ອງຄົນຂັບເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ຜູ້ຂັບຂີ່ຈອດຮັບເອົາຜູ້ໂດຍສານຕາມທາງດ່ວນ ທີ່ບໍ່ແມ່ນຈຸດພັກລົດ ຢ່າງເດັດຂາດ;

**ມາດຕາ 16 ການເຂົ້າ-ອອກທາງດ່ວນ**

ໃນເວລາທີ່ຍານພາຫະນະຈະເຂົ້າທາງດ່ວນ ຕ້ອງຫຼຸດຜ່ອນຄວາມໄວ ຫຼື ຢຸດຍານພາຫະນະຢູ່ຈຸດເລີ່ມຕົ້ນ ເປີດໄຟສັນຍານ ສັງເກດເບິ່ງຍານພາຫະນະທີ່ແລ່ນມາຕາມທາງດ່ວນເບື້ອງຊ້າຍ ເມື່ອເຫັນວ່າມີຄວາມປອດໄພແລ້ວ ຈຶ່ງເລັ່ງຄວາມໄວຂຶ້ນ ເພື່ອເຂົ້າທາງດ່ວນ. ພາຍຫຼັງຍານພະຫະນະເຂົ້າສູ່ທາງດ່ວນ ແລະ ເຂົ້າສູ່ຊ່ອງຈະລາຈອນປົກກະຕິແລ້ວ ຜູ້ຂັບຂີ່ຕ້ອງເພີ່ມຄວາມໄວ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 20 ຂອງ ຂໍ້ຕົກລົງສະບັບນີ້.

ໃນເວລາທີ່ຍານພາຫະນະຈະອອກທາງດ່ວນ ຕ້ອງເຂົ້າຊ່ອງຈະລາຈອນທີ່ເຊື່ອມຕໍ່ກັບທາງອອກຕາມປ້າຍສັນຍານເຕືອນ ແລະ ບອກທິດທາງ ແລະ ຫຼຸດຜ່ອນຄວາມໄວລົງ, ໃນຂະນະທີ່ອອກຈາກທາງດ່ວນເຂົ້າສູ່ທາງອອກ ຕ້ອງເປີດໄຟສັນຍານລ້ຽວ ຂວາ ຫຼື ຊ້າຍ ເພື່ອກຽມເຂົ້າສູ່ທາງຫຼວງ, ຖະໜົນ.

**ມາດຕາ 17 ການຊີງຂຶ້ນໜ້າ**

ກ່ອນຈະຊີງຂຶ້ນໜ້າ ຜູ້ຂັບຂີ່ຍານພາຫະນະ ຕ້ອງເບິ່ງແວ່ນສ່ອງຂ້າງເບື້ອງຊ້າຍຂອງຕົນ, ເມື່ອເຫັນວ່າມີຄວາມປອດໄພ ແລະ ມີໄລຍະຫ່າງພຽງພໍທີ່ຈະຊີງ ຈຶ່ງໃຫ້ສັນຍານດ້ວຍການເປີດໄຟສັນຍານລ້ຽວຊ້າຍ, ຖ້າເປັນຍາມຄໍ່າມືດ ໃຫ້ເຕືອນດ້ວຍການກົດໄຟຕາ ສູງ ແລະ ຕໍ່າ ສະຫຼັບກັນ ແລ້ວຈຶ່ງເລັ່ງຄວາມໄວຂຶ້ນໄປ ເມື່ອຊີງຂຶ້ນໄປຫວິດ ແລະ ເຫັນວ່າມີໄລຍະຫ່າງຢ່າງພຽງພໍແລ້ວ ຈຶ່ງໃຫ້ສັນຍານໄຟລ້ຽວຂວາ ເພື່ອເຂົ້າສູ່ຊ່ອງຈະລາຈອນປົກກະຕິ.

ເມື່ອໄດ້ຮັບສັນຍານຂໍຊີງຂຶ້ນໜ້າ, ຜູ້ທີ່ຖືກຊີງ ຕ້ອງສັງເກດເບິ່ງທາງເບື້ອງໜ້າຂອງຕົນວ່າ ຮັບປະກັນຄວາມປອດໄພແລ້ວ, ຈາກນັ້ນຈຶ່ງເປີດໄຟສັນຍານລ້ຽວຂວາ ເພື່ອສັນຍານໃຫ້ຊີງຂຶ້ນໜ້າໄດ້.

**ມາດຕາ 18 ປະເພດຍານພາຫະນະທີ່ບໍ່ອະນຸຍາດໃຫ້ເຂົ້າທາງດ່ວນ**

ປະເພດຍານພາຫະນະທີ່ບໍ່ອະນຸຍາດໃຫ້ເຂົ້າທາງດ່ວນ ມີ ດັ່ງນີ້:

1. ລົດຖີບ, ລົກຈັກ, ລົດທີ່ບໍ່ມີເຄື່ອງຈັກ, ລົດທີ່ນໍາໃຊ້ສັດລາກແກ່;

2. ລົດກົນຈັກກະສິກຳ, ລົດກົນຈັກໜັກ, ລົດຕີນເຫຼັກ;

3. ລົດໃຊ້ໃນການທົດສອບ, ລົດຮຽນຂັບ;

4. ລົດບັນທຸກ, ລົດພ່ວງ ທີ່ມີນ້ຳໜັກເກີນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢ່າງເປັນທາງການ;

5. ຍານພະຫະນະທີ່ມີການດັດແປງສະພາບເຕັກນິກທີ່ບໍ່ໄດ້ມາດຕະຖານ;

6. ຍານພາຫະນະ ທີ່ມີຄວາມສ່ຽງດ້ານຄວາມປອດໄພ ແລະ ຍານພາຫະນະອື່ນ ທີ່ອອກແບບຄວາມໄວ ຕໍ່າກວ່າ 70 ກິໂລແມັດ/ຊົ່ວໂມງ.

**ມາດຕາ 19 ການກຳນົດຄວາມໄວຕາມທາງດ່ວນ**

ເວລາຂັບຂີ່ຍານພະຫະນະຕາມທາງດ່ວນ ໃນຊ່ອງຈະລາຈອນປົກກະຕິ ຕ້ອງຮັກສາຄວາມໄວ ດັ່ງນີ້:

1. ປະເພດລົດເບົາ ໃຫ້ແລ່ນດ້ວຍຄວາມໄວ ແຕ່ 80-110 ກິໂລແມັດ/ຊົ່ວໂມງ;

2. ລົດບັນທຸກນ້ຳໜັກລວມເກີນ 3,500 ກິໂລກລາມ ແລະ ລົດຂົນສົ່ງຜູ້ໂດຍສານ ໃຫ້ແລ່ນດ້ວຍຄວາມໄວ ແຕ່ 70-90 ກິໂລແມັດ/ຊົ່ວໂມງ;

3. ຜູ້ຂັບຂີ່ຕ້ອງປະຕິບັດຕາມ ໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນ ທີ່ຈຳກັດຄວາມໄວຢ່າງເຂັ້ມງວດ;

4. ຍານພາຫະນະທຸກປະເພດທີ່ແລ່ນຜ່ານອຸໂມງທາງດ່ວນ ແມ່ນໃຫ້ໃຊ້ຄວາມໄວ ບໍ່ເກີນ 80 ກິໂລແມັດ/ຊົ່ວໂມງ.

**ມາດຕາ 20 ການຮັກສາໄລຍະຫ່າງ**

ຜູ້ຂັບຂີ່ຍານພາຫະນະຕາມທາງດ່ວນ ຕ້ອງຮັກສາໄລຍະຫ່າງຕາມຫຼັງກັນຫຼາຍກວ່າ 100 ແມັດ ທີ່ໃຊ້ຄວາມໄວ 100 ກິໂລແມັດ/ຊົ່ວໂມງ ແລະ ຫຼາຍກວ່າ 70 ແມັດ ທີ່ໃຊ້ຄວາມໄວ 70 ກິໂລແມັດ/ຊົ່ວໂມງ.

ໃນກໍລະນີ ຫາກມີ ລົມແຮງ, ຝົນຕົກ ແລະ ໝອກ ເຮັດໃຫ້ໜ້າທາງມື່ນ ແລະ ແນມເຫັນບໍ່ແຈ້ງ ຜູ້ຂັບຂີ່ຍານພາຫະນະ ຕ້ອງຫຼຸດຜ່ອນຄວາມໄວ ແລະ ຮັກສາໄລຍະຫ່າງຕາມຫຼັງກັນໃຫ້ເໝາະສົມ ເພື່ອຮັບປະກັນຄວາມປອດໄພ.

**ມາດຕາ 21 ການບັນທຸກນ້ຳໜັກເກີນ**

ຍານພາຫະນະທີ່ຂັບຂີ່ຕາມທາງດ່ວນ ແມ່ນບໍ່ອະນຸຍາດໃຫ້ບັນທຸກນ້ຳໜັກເກີນ ຕາມຂໍ້ກຳນົດກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກໃນແຕ່ລະໄລຍະ.

ໃນກໍລະນີ ຜູ້ຂັບຂີ່ຍານພາຫະນະຫາກລະເມີດຂໍ້ກຳນົດກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດຂອງລົດບັນທຸກ ຈະຖືກປັບໃໝຕາມລັດຖະບັນຍັດຂອງປະທານປະເທດ ແລະ ຂໍ້ກຳນົດຂອງລັດຖະມົນຕີ ວາງອອກແຕ່ລະໄລຍະ.

## ໝວດທີ 5
## ຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກ

**ມາດຕາ 22 ຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກຕາມທາງດ່ວນ**

ຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກ ຕາມທາງດ່ວນ ໃຫ້ປະຕິບັດ ດັ່ງນີ້:

1. ໃນກໍລະນີ ຫາກຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກ ຜູ້ຂັບຂີ່ຕ້ອງເປີດໄຟສັນຍານເຕືອນທັນທີ, ແລ້ວແນບຍານພາຫະນະເຂົ້າບ່າທາງ ພ້ອມທັງວາງອຸປະກອນທີ່ເປັນສັນຍາລັກແຈ້ງເຕືອນຢູ່ດ້ານຫຼັງຂອງທິດທາງການຂັບຂີ່ໃນໄລຍະຫ່າງ ຢ່າງໜ້ອຍ 100 ແມັດ;

2. ໃນເວລາຍານພາຫະນະກຳລັງແລ່ນ ແລະ ຈຳເປັນຕ້ອງຢຸດສ້ອມແປງຊົ່ວຄາວ ເນື່ອງຈາກມີຄວາມຜິດປົກກະຕິ ຈະຕ້ອງເປີດໄຟສັນຍານລ້ຽວຂວາລ່ວງໜ້າ ເພື່ອອອກຈາກຊ່ອງຈະລາຈອນປົກກະຕິ ແລະ ຊອກພື້ນທີ່ບໍລິການທີ່ຢູ່ໃກ້ທີ່ສຸດ ຫຼື ຈອດຢູ່ບ່າທາງ.

**ມາດຕາ 23 ຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກ ທີ່ບໍ່ສາມາດເຄື່ອນຍ້າຍໄດ້**

ໃນກໍລະນີ ຫາກຍານພາຫະນະຕິດຂັດທາງດ້ານເຕັກນິກທີ່ບໍ່ສາມາດເຄື່ອນຍ້າຍອອກຈາກຊ່ອງຈະລາຈອນປົກກະຕິໄປຫາບ່າທາງໄດ້ ຜູ້ຂັບຂີ່ຍານພາຫະນະຕ້ອງເປີດໄຟສັນຍານສຸກເສີນທັນທີ ແລະ ພ້ອມທັງວາງອຸປະກອນທີ່ເປັນສັນຍານ ຫຼື ສັນຍາລັກ ແຈ້ງເຕືອນ ຢູ່ດ້ານຫຼັງຂອງຍານພາຫະນະ ໃນໄລຍະຫ່າງ ຢ່າງໜ້ອຍ 150 ແມັດ ໃນເວລາກາງເວັນ ແລະ 200 ແມັດ ໃນເວລາກາງຄືນ ຫຼື ໃນເວລາສະພາບອາກາດ ມືດມົວ.

ຜູ້ຂັບຂີ່ຍານພາຫະນະ ແລະ ຜູ້ໂດຍສານຕ້ອງຟ້າວເຄື່ອນຍ້າຍອອກໄປຢູ່ບ່າທາງ ແລະ ແຈ້ງຕໍ່ຕຳຫຼວດຈະລາຈອນທາງດ່ວນ ທັນທີ, ພ້ອມທັງແຈ້ງ ໜ່ວຍກູ້ຊີບ-ກູ້ໄພສຸກເສີນ ເພື່ອເຄື່ອນຍ້າຍຍານພາຫະນະທີ່ຕິດຂັດທາງດ້ານເຕັກນິກອອກຈາກຊ່ອງຈະລາຈອນປົກກະຕິ.

## ໝວດທີ 6
## ອຸບປະຕິເຫດຕາມທາງດ່ວນ

**ມາດຕາ 24 ການເກີດອຸບປະຕິເຫດຕາມທາງດ່ວນ**

ການເກີດອຸບປະຕິເຫດຕາມທາງດ່ວນ ໃນທຸກກໍລະນີ ແມ່ນເຈົ້າໜ້າທີ່ຕຳຫຼວດຈະລາຈອນທາງດ່ວນເປັນເຈົ້າການດຳເນີນຄະດີຕາມກົດໝາຍ ຂອງ ສປປ ລາວ ກຳນົດເປັນແຕ່ລະກໍລະນີ.

**ມາດຕາ 25 ອຸບປະຕິເຫດທີ່ບໍ່ມີຄົນບາດເຈັບ**

ສຳລັບອຸບປະຕິເຫດທີ່ບໍ່ມີຄົນບາດເຈັບ ຕາມທາງດ່ວນ ຜູ້ຂັບຂີ່ຍານພາຫະນະຕ້ອງປະຕິບັດ ດັ່ງນີ້:

1. ຢຸດຍານພາຫະນະທັນທີ ແລະ ເປີດໄຟສັນຍານສຸກເສີນ;

2. ວາງ ຫຼື ຕິດຕັ້ງອຸປະກອນເຕືອນອັນຕະລາຍ, ບໍ່ໃຫ້ເຄື່ອນຍ້າຍຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນຕ່າງໆ ທີ່ເກີດຂຶ້ນຈາກອຸບປະຕິເຫດ;

3. ຜູ້ຂັບຂີ່ ແລະ ຜູ້ໂດຍສານ ທີ່ບໍ່ໄດ້ ຮັບບາດເຈັບ ຫຼື ເສຍຊີວິດ ຕ້ອງເຄື່ອນຍ້າຍໄປບ່າທາງ ຫຼື ເຂດປອດໄພອື່ນໂດຍດ່ວນ;

4. ໃນກໍລະນີ ຫາກບໍ່ສາມາດເຄື່ອນຍ້າຍຍານພາຫະນະທີ່ເກີດອຸບປະຕິເຫດອອກຈາກຊ່ອງຈະລາຈອນປົກກະຕິ ຜູ້ຂັບຂີ່ຍານພາຫະນະ ຕ້ອງຖ່າຍຮູບ ຫຼື ຖ່າຍວີດີໂອ ສະຖານທີ່ເກີດເຫດໄວ້ ແລະ ຕິດຕັ້ງອຸປະກອນ ທີ່ເປັນສັນຍານແຈ້ງເຕືອນທາງດ້ານຫຼັງຂອງຍານພາຫະນະ ໃນໄລຍະຫ່າງ ຢ່າງໜ້ອຍ 150 ແມັດ ໃນເວລາກາງເວັນ ແລະ 200 ແມັດ ໃນເວລາກາງຄືນ;

5. ໃນກໍລະນີ ຫາກສາມາດເຄື່ອນຍ້າຍຍານພາຫະນະທີ່ເກີດອຸບປະຕິເຫດ ຜູ້ຂັບຂີ່ຍານພາຫະນະຕ້ອງຂີດໝາຍຕຳແໜ່ງຂອງຍານພາຫະນະຢູ່ບໍລິເວນທີ່ເກີດເຫດ, ຖ່າຍຮູບ ຫຼື ຖ່າຍວີດີໂອໄວ້ ກ່ອນການເຄື່ອນຍ້າຍຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນດັ່ງກ່າວ ບົນພື້ນຖານການຕົກລົງເຫັນດີຂອງຄູ່ກໍລະນີ;

6. ແຈ້ງເຈົ້າໜ້າທີ່ທາງດ່ວນ, ຕຳຫຼວດຈະລາຈອນທາງດ່ວນ ທັນທີ, ແຈ້ງໜ່ວຍກູ້ຊີບ-ກູ້ໄພສຸກເສີນ ແລະ ພະນັກງານປະກັນໄພ;

7. ບັນທຶກ ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຜູ້ເຫັນເຫດການ ແລ້ວລໍຖ້າຈົນກວ່າ ຕຳຫຼວດຈະລາຈອນທາງດ່ວນມາຮອດ;

8. ເຮັດບົດບັນທຶກ ແລະ ລົງລາຍເຊັນ ລະຫວ່າງຄູ່ກໍລະນີ ກ່ຽວກັບອຸບປະຕິເຫດ ໂດຍຊ້ອງໜ້າຕຳຫຼວດຈະລາຈອນທາງດ່ວນ ແລະ ຜູ້ຕາງໜ້າບໍລິສັດປະກັນໄພ.

**ມາດຕາ 26 ອຸບປະຕິເຫດທີ່ມີຄົນບາດເຈັບ**

ສໍາລັບອຸບປະຕິເຫດທີ່ມີຄົນບາດເຈັບ ຜູ້ຂັບຂີ່ຍານພາຫະນະຕ້ອງປະຕິບັດ ດັ່ງນີ້:

1. ຈອດຍານພາຫະນະທັນທີ;
2. ເປີດໄຟສັນຍານສຸກເສີນ;
3. ຜູ້ຂັບຂີ່ ຫຼື ຜູ້ຮ່ວມໃຊ້ທາງດ່ວນ ຕ້ອງແຈ້ງໃຫ້ ຕໍາຫຼວດຈະລາຈອນທາງດ່ວນ ທັນທີ, ພ້ອມທັງແຈ້ງ ໜ່ວຍກູ້ຊີບ-ກູ້ໄພສຸກເສີນ, ລົດໂຮງໝໍ ຊ່ວຍເຫຼືອຄົນບາດເຈັບ, ຜູ້ສໍາປະທານ ແລະ ບໍລິສັດປະກັນໄພ;
4. ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນ ທີ່ບໍ່ສາມາດເຄື່ອນຍ້າຍ, ຕ້ອງຕິດຕັ້ງອຸປະກອນເຕືອນອັນຕະລາຍ ທາງຫຼັງຍານພາຫະນະ ໃນໄລຍະຫ່າງ ຢ່າງໜ້ອຍ 150 ແມັດ ໃນເວລາກາງເວັນ ແລະ 200 ແມັດ ໃນເວລາກາງຄືນ;
5. ຜູ້ຂັບຂີ່ ແລະ ຜູ້ໂດຍສານ ຕ້ອງເຄື່ອນຍ້າຍໄປບ່າທາງ ຫຼື ເຂດປອດໄພອື່ນໂດຍດ່ວນ;
6. ໃນກໍລະນີ ຫາກມີການກີດຂວາງການຈະລາຈອນ, ຕ້ອງຂີດໝາຍຕໍາແໜ່ງຂອງຍານພາຫະນະຢູ່ບໍລິເວນສະຖານທີ່ເກີດເຫດ, ຖ່າຍຮູບ ຫຼື ຖ່າຍວີດີໂອໄວ້ ກ່ອນການເຄື່ອນຍ້າຍ ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນດັ່ງກ່າວ ຕ້ອງໄດ້ຜ່ານການຕົກລົງເຫັນດີຂອງຄູ່ກໍລະນີ;
7. ບັນທຶກ ຊື່ ແລະ ນາມສະກຸນຂອງ ຄູ່ກໍລະນີ ແລະ ບຸກຄົນທີ່ກ່ຽວຂ້ອງກັບອຸບປະຕິເຫດ ລວມທັງ ຂໍ້ມູນສ່ວນຕົວຂອງພວກກ່ຽວ ແລ້ວລໍຖ້າໃຫ້ ຕໍາຫຼວດຈາລະຈອນທາງດ່ວນມາເຖິງ.

**ມາດຕາ 27 ອຸບປະຕິເຫດທີ່ມີຄົນເສຍຊີວິດ**

ສໍາລັບອຸບປະຕິເຫດທີ່ມີຄົນເສຍຊີວິດ ແຕ່ຜູ້ຂັບຂີ່ຍານພາຫະນະທີ່ຍັງມີຊີວິດ ຕ້ອງປະຕິບັດ ດັ່ງນີ້:

1. ຈອດຍານພາຫະນະທັນທີ;
2. ເປີດໄຟສັນຍານສຸກເສີນ;
3. ແຈ້ງໃຫ້ຕໍາຫຼວດຈະລາຈອນທາງດ່ວນ, ໜ່ວຍກູ້ຊີບ-ກູ້ໄພສຸກເສີນ, ລົດໂຮງໝໍ, ຜູ້ສໍາປະທານ ແລະ ບໍລິສັດປະກັນໄພ ທັນທີ;

ສໍາລັບກໍລະນີຫາກຜູ້ຂັບຂີ່ເສຍຊີວິດ, ຜູ້ຮ່ວມໃຊ້ທາງດ່ວນ ຫຼື ຜູ້ເຫັນເຫດການ ຕ້ອງປະຕິບັດ ດັ່ງນີ້:

1) ຢຸດຍານພາຫະນະຂອງຕົນຢູ່ບ່າທາງ;
2) ເປີດໄຟສັນຍານເຕືອນອັນຕະລາຍ;
3) ວາງອຸປະກອນ ເພື່ອເຕືອນໃຫ້ຍານພາຫະນະທີ່ແລ່ນມາຕາມທາງຫຼັງ;
4) ແຈ້ງໃຫ້ເຈົ້າໜ້າທີ່ທາງດ່ວນໃນທັນທີ, ໜ່ວຍກູ້ຊີບ-ກູ້ໄພສຸກເສີນ ແລະ ລົດໂຮງໝໍ ເພື່ອເຄື່ອນຍ້າຍຊາກສົບອອກຈາກສະຖານທີ່ເກີດເຫດ ພ້ອມທັງແຈ້ງຕໍາຫຼວດຈະລາຈອນທາງດ່ວນ ແລະ ບໍລິສັດປະກັນໄພ ໂດຍດ່ວນ;

4. ໃນກໍລະນີ ຫາກມີການກີດຂວາງການຈະລາຈອນ, ຕ້ອງຂີດໝາຍຕໍາແໜ່ງຂອງຍານພາຫະນະຢູ່ບໍລິເວນສະຖານທີ່ເກີດເຫດ, ຖ່າຍຮູບ ຫຼື ຖ່າຍວີດີໂອໄວ້ ກ່ອນການເຄື່ອນຍ້າຍ ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນດັ່ງກ່າວ ຕ້ອງໄດ້ຜ່ານການຕົກລົງເຫັນດີຂອງຄູ່ກໍລະນີ;
5. ບັນທຶກ ຊື່ ແລະ ນາມສະກຸນຂອງ ຄູ່ກໍລະນີ ແລະ ບຸກຄົນທີ່ກ່ຽວຂ້ອງກັບອຸບປະຕິເຫດ ລວມທັງ ຂໍ້ມູນສ່ວນຕົວຂອງພວກກ່ຽວ ແລ້ວລໍຖ້າໃຫ້ ຕໍາຫຼວດຈາລະຈອນທາງດ່ວນມາເຖິງ.

**ມາດຕາ 28 ໜ້າທີ່ຂອງຕໍາຫຼວດຈະລາຈອນທາງດ່ວນ**

ເມື່ອໄດ້ຮັບແຈ້ງຄວາມວ່າ ມີອຸບປະຕິເຫດເກີດຂຶ້ນຢູ່ທາງດ່ວນ ຕໍາຫຼວດຈະລາຈອນທາງດ່ວນ ຕ້ອງລົງຊັນນະສູດ, ບັນທຶກເຫດການ, ຖ່າຍຮູບ ແລະ ແຕ້ມແຜນວາດດຽວ ໃຫ້ ລະອຽດ, ຊັດເຈນ, ຄົບຖ້ວນ ກ່ຽວກັບສະຖານທີ່ເກີດເຫດ ລວມທັງ ສືບສວນ-ສອບສວນ ຜູ້ກ່ຽວຂ້ອງ ແລະ ພະຍານ ທີ່ຢູ່ໃນເຫດການຢ່າງທັນການ ເພື່ອດໍາເນີນການແກ້ໄຂຕາມກົດໝາຍ ແລະ ລະບຽບການ ພ້ອມທັງຍົກຍ້າຍຍານພາຫະນະ ແລະ ສິ່ງກີດຂວາງອອກຈາກພື້ນທີ່ບ່ອນເກີດອຸບປະຕິເຫດຢ່າງຮີບດ່ວນ.

**ມາດຕາ 29 ອຸບປະຕິເຫດຢູ່ອຸໂມງທາງດ່ວນ**

ສໍາລັບອຸບປະຕິເຫດຢູ່ອຸໂມງທາງດ່ວນ ຜູ້ຂັບຂີ່ຍານພາຫະນະຕ້ອງປະຕິບັດ ດັ່ງນີ້:

1. ຜູ້ຂັບຂີ່ຍານພາຫະນະຕ້ອງຈອດຍານພາຫະນະທັນທີ;

2. ໜ່ວຍງານຄວບຄຸມກິດຈະການທາງດ່ວນ ຕ້ອງເປີດໄຟສັນຍານສຸກເສີນ ແລະ ວາງໄມ້ກັ້ນ ເພື່ອປິດອຸໂມງ;

3. ແຈ້ງ ໜ່ວຍກູ້ຊີບ-ກູ້ໄພສຸກເສີນ ແລະ ລົດໂຮງໝໍ ພ້ອມທັງແຈ້ງຕໍາຫຼວດຈະລາຈອນທາງດ່ວນ ແລະ ບໍລິສັດປະກັນໄພ ໂດຍດ່ວນ;

4. ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນ ທີ່ບໍ່ສາມາດເຄື່ອນຍ້າຍ, ຕ້ອງຕິດຕັ້ງອຸປະກອນເຕືອນອັນຕະລາຍ ໃນໄລຍະຫ່າງຈາກປາກອຸໂມງ ຢ່າງໜ້ອຍ 150 ແມັດ ໃນເວລາກາງເວັນ ແລະ 200 ແມັດ ໃນເວລາກາງຄືນ;

5. ຜູ້ຂັບຂີ່ຍານພາຫະນະ ແລະ ຜູ້ໂດຍສານ ທີ່ບໍ່ໄດ້ ຮັບບາດເຈັບ ຫຼື ເສຍຊີວິດ ຕ້ອງເຄື່ອນຍ້າຍໄປຫາອຸໂມງຄູ່ຂະໜານ ໂດຍຜ່ານອຸໂມງສຸກເສີນໂດຍດ່ວນ;

6. ໃນກໍລະນີ ຫາກມີການກີດຂວາງການຈະລາຈອນ, ຕ້ອງຂີດໝາຍຕໍາແໜ່ງຂອງຍານພາຫະນະຢູ່ບໍລິເວນສະຖານທີ່ເກີດເຫດ, ຖ່າຍຮູບ ຫຼື ຖ່າຍວີດີໂອໄວ້, ກ່ອນການເຄື່ອນຍ້າຍ ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນດັ່ງກ່າວ ແລະ ຕ້ອງໄດ້ຮັບການຕົກລົງເຫັນດີຂອງຄູ່ກໍລະນີ;

7. ບັນທຶກ ຊື່ ແລະ ນາມສະກຸນຂອງ ຄູ່ກໍລະນີ ແລະ ບຸກຄົນທີ່ກ່ຽວຂ້ອງກັບອຸບປະຕິເຫດ ລວມທັງ ຂໍ້ມູນສ່ວນຕົວຂອງພວກກ່ຽວ ແລ້ວລໍຖ້າໃຫ້ ຕໍາຫຼວດຈາລະຈອນທາງດ່ວນມາເຖິງ.

ເມື່ອໄດ້ຮັບແຈ້ງວ່າມີອຸບປະຕິເຫດເກີດຂຶ້ນຢູ່ອຸໂມງທາງດ່ວນ ຕໍາຫຼວດຈະລາຈອນທາງດ່ວນ ຕ້ອງລົງໄປເຖິງສະຖານທີ່ເກີດເຫດໃນທັນທີ ເພື່ອຊີ້ນໍາ ແລະ ລະບາຍການຈະລາຈອນຢູ່ອຸໂມງ ທີ່ເກີດອຸບປະຕິເຫດ.

**ມາດຕາ 30 ການບໍລິການຍົກຍ້າຍຍານພາຫະນະ ແລະ ສິ່ງກີດຂວາງ**

ຜູ້ສໍາປະທານເປັນຜູ້ສະໜອງໜ່ວຍງານບໍລິການຍົກຍ້າຍຍານພາຫະນະ ແລະ ສິ່ງກີດຂວາງ ທີ່ເກີດອຸບປະຕິເຫດ ໄປເກັບໄວ້ໃນສະຖານທີ່ ທີ່ຜູ້ສໍາປະທານກໍານົດ, ສ່ວນຄ່າໃຊ້ຈ່າຍ ແລະ ທົດແທນຄ່າເສຍຫາຍທັງໝົດ ແມ່ນເປັນຄວາມຮັບຜິດຊອບຂອງ ຄູ່ກໍລະນີ ຫຼື ຜູ້ກໍ່ເຫດ.

## ໝວດທີ 7
## ການສັນຍານເຕືອນອັນຕະລາຍ

**ມາດຕາ 31 ປະເພດສັນຍານເຕືອນອັນຕະລາຍ**

ສັນຍານເຕືອນອັນຕະລາຍ ມີ ດັ່ງນີ້:

1. ອຸປະກອນ, ເຄື່ອງໝາຍ ແລະ ປ້າຍ;
2. ໄຟສັນຍານສຸກເສີນຍານພາຫະນະ;
3. ເຄື່ອງໝາຍເຕືອນອັນຕະລາຍຂອງ ຕໍາຫຼວດຈະລາຈອນທາງດ່ວນ ຫຼື ບຸກຄົນທີ່ຖືກມອບໝາຍ.

**ມາດຕາ 32 ການສັນຍານດ້ວຍ ອຸປະກອນ, ເຄື່ອງໝາຍ ແລະ ປ້າຍ**

ຜູ້ຂັບຂີ່ຍານພາຫະນະ ຕ້ອງຕິດຕັ້ງສັນຍານເຕືອນອັນຕະລາຍດ້ວຍ ອຸປະກອນ, ເຄື່ອງໝາຍ ແລະ ປ້າຍ ດັ່ງນີ້:

1. ນໍາໃຊ້ສັນຍານໄຟສຸກເສີນ ແລະ ປ້າຍສາມຫຼ່ຽມເຕືອນອັນຕະລາຍ ໃນກໍລະນີເກີດອຸບປະຕິເຫດ ຫຼື ຕິດຂັດທາງດ້ານເຕັກນິກ;

2. ໃນກໍລະນີຫາກມີຄວາມຈໍາເປັນຕ້ອງຈອດລົດຢູ່ບ່ອນຫ້າມຈອດ ຫຼື ບ່ອນທີ່ມີການແນມເຫັນຈໍາກັດ

ຕ້ອງວາງປ້າຍສາມຫຼ່ຽມເຕືອນເຫດສຸກເສີນ ຫ່າງຈາກທ້າຍຍານພາຫະນະຢ່າງໜ້ອຍ 150 ແມັດ ໃນເວລາກາງເວັນ ແລະ 200 ແມັດ ໃນເວລາກາງຄືນ ຫຼື ໃນສະພາບອາກາດມືດມົວ.

**ມາດຕາ 33 ໄຟສັນຍານສຸກເສີນຂອງຍານພາຫະນະ**

ຜູ້ຂັບຂີ່ຍານພາຫະນະ ຕ້ອງເປີດໄຟສັນຍານສຸກເສີນໃນກໍລະນີ ດັ່ງນີ້:

1. ເກີດອຸບປະຕິເຫດ;

2. ເມື່ອມີຄວາມຈຳເປັນ ຕ້ອງຈອດຍານພາຫະນະ ຢູ່ບ່ອນຫ້າມຈອດ ຍ້ອນເກີດເຫດຕິດຂັດທາງດ້ານເຕັກນິກ ຫຼື ຜູ້ຂັບຂີ່ເຈັບປ່ວຍກະທັນຫັນ;

ນອກຈາກນີ້ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນ ເພື່ອເຕືອນໃຫ້ຜູ້ຂັບຂີ່ອື່ນມີສະຕິລະວັງຕົວຕໍ່ອັນຕະລາຍ ທີ່ອາດຈະເກີດຂຶ້ນ.

**ມາດຕາ 34 ການປະກອບ ອຸປະກອນ, ເຄື່ອງໝາຍ ແລະ ປ້າຍສັນຍານ**

ຍານພາຫະນະທຸກປະເພດ ຕ້ອງມີປ້າຍສາມຫຼ່ຽມສະທ້ອນແສງຕິດລົດໄວ້ ສອງ ອັນ ສຳລັບຍານພາຫະນະທີ່ກລໍ້ ຂຶ້ນໄປ ຕ້ອງມີຈອຍຢາງສະທ້ອນແສງ ຈຳນວນ ສອງ ອັນ ເພື່ອນຳໃຊ້ເຕືອນອັນຕະລາຍ ແລະ ປ້ອງກັນຄວາມປອດໄພ ໃນເວລາຍານພາຫະນະຕິດຂັດທາງດ້ານເຕັກນິກ ແລະ ເກີດອຸບປະຕິເຫດ.

## ໝວດທີ 8
## ການເກັບເງິນຄ່າຜ່ານທາງດ່ວນ, ສິດ ແລະ ພັນທະຂອງຜູ້ສຳປະທານ

**ມາດຕາ 35 ການກຳນົດຄ່າຜ່ານທາງດ່ວນ**

ຄ່າຜ່ານທາງດ່ວນ ແມ່ນໃຫ້ປະຕິບັດຕາມສັນຍາສຳປະທານ ທີ່ໄດ້ເຊັນກັບລັດຖະບານ ສປປ ລາວ ນັ້ນຢ່າງເຂັ້ມງວດ, ໃນກໍລະນີມີການປ່ຽນແປງລາຄາຄ່າຜ່ານທາງດ່ວນ ຕ້ອງໄດ້ຮັບຮອງຈາກລັດຖະບານ ແລະ ພາຍຫຼັງລັດຖະບານ ໄດ້ຮັບຮອງຄ່າຜ່ານທາງດ່ວນແລ້ວ, ຜູ້ສຳປະທານ ຕ້ອງແຈ້ງກ່ຽວກັບ ການເກັບເງິນຄ່າຜ່ານທາງດ່ວນ ພ້ອມທັງໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້ ຢ່າງກວ້າງຂວາງ.

**ມາດຕາ 36 ສະຖານນີເກັບເງິນຄ່າຜ່ານທາງດ່ວນ**

ສະຖານນີເກັບເງິນຄ່າຜ່ານທາງດ່ວນ ແມ່ນຕັ້ງໄວ້ຕາມຈຸດທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ແລະ ການເກັບເງິນຄ່າຜ່ານທາງດ່ວນ ແມ່ນເກັບຢູ່ແຕ່ລະສະຖານນີປາຍທາງ.

**ມາດຕາ 37 ການເກັບເງິນຄ່າຜ່ານທາງດ່ວນ**

ການເກັບເງິນຄ່າຜ່ານທາງດ່ວນ ມີ ສອງ ແບບ ດັ່ງນີ້:

1. ແບບໃຊ້ເງິນສົດ;

2. ແບບໃຊ້ລະບົບອັດຕະໂນມັດ ເປັນຕົ້ນ ໃຊ້ບັດເຕີມເງິນ ແລະ ເອເລັກໂຕຣນິກອື່ນໆ.

**ມາດຕາ 38 ສິດຂອງຜູ້ສຳປະທານ**

ຜູ້ສຳປະທານ ມີສິດ ດັ່ງນີ້:

1. ເກັບເງິນຄ່າຜ່ານທາງດ່ວນຢູ່ປ້ອງເກັບຂອງສະຖານີເກັບເງິນຕາມອັດຕາທີ່ລັດຖະບານຮັບຮອງ;

2. ບໍ່ອະນຸຍາດໃຫ້ຍານພາຫະນະເຂົ້າທາງດ່ວນໃນກໍລະນີບໍ່ຈ່າຍຄ່າຜ່ານທາງດ່ວນ;

3. ເກັບເງິນຄ່າຜ່ານທາງດ່ວນທີ່ໄກທີ່ສຸດ ສຳລັບກໍລະນີຍານພາຫະນະບໍ່ມີໃບຢັ້ງຢືນຈາກປະຕູເຂົ້າ ຫຼື ສະໜອງຂໍ້ມູນໄລຍະທາງທີ່ບໍ່ຖືກຕ້ອງ;

4. ເກັບເງິນຄ່າຜ່ານທາງດ່ວນຕາມໄລຍະທາງຕົວຈິງ ສຳລັບຍານພາຫະນະທີ່ມີໃບຢັ້ງຢືນຈາກປະຕູເຂົ້າ;

5. ກໍລະນີຜູ້ນຳໃຊ້ພື້ນທີ່ສະຫງວນຂອງທາງດ່ວນ ສ້າງຜົນເສຍຫາຍຢູ່ເຂດພື້ນທີ່ສະຫງວນທາງດ່ວນ ຜູ້ສຳປະທານມີສິດຮຽກຮ້ອງທົດແທນຄ່າເສຍຫາຍທີ່ເກີດຂຶ້ນໃນທາງດ່ວນ ແລະ ພື້ນທີ່ສະຫງວນຂອງທາງດ່ວນ;

6. ສາມາດຈຳກັດຄວາມໄວ, ປ່ຽນຊ່ອງຈະລາຈອນ, ຢຸດການຈະລາຈອນຊົ່ວຄາວ ແລະ ນຳໃຊ້ມາດຕະການຄຸ້ມຄອງການຈະລາຈອນ ເມື່ອມີຜົນກະທົບຈາກໄພທຳມະຊາດ, ດິນຟ້າອາກາດບໍ່ດີ, ຈາກການກໍ່ສ້າງ-ສ້ອມແປງ ຫຼື ການເກີດອຸບປະຕິເຫດຕາມທາງດ່ວນ;

7. ຮຽກຮ້ອງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທົດແທນຄ່າເສຍຫາຍ ທີ່ຕົນໄດ້ສ້າງຂຶ້ນຕໍ່ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນ ໃຫ້ຜູ້ສຳປະທານ;

8. ເກັບຄ່າປັບໃໝຍານພາຫະນະທີ່ບັນທຸກນ້ຳໜັກເກີນ ຕາມຂໍ້ກຳນົດກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກໃນແຕ່ລະໄລຍະ.

## ມາດຕາ 39 ພັນທະຂອງຜູ້ສຳປະທານ

ຜູ້ສຳປະທານ ມີພັນທະ ດັ່ງນີ້:

1. ສະໜອງການບໍລິການໃຫ້ສາມາດນຳໃຊ້ທາງດ່ວນໄດ້ ຢ່າງເປັນປົກກະຕິ;

2. ແນະນຳລະບຽບຫຼັກການກ່ຽວກັບການນຳໃຊ້ທາງດ່ວນໃຫ້ແກ່ຜູ້ນຳໃຊ້ທາງດ່ວນ ຢ່າງລະອຽດ ແລະ ຈະແຈ້ງ;

3. ໂຄສະນາເຜີຍແຜ່ກ່ຽວກັບຂໍ້ມູນຂ່າວສານຂອງທາງດ່ວນ ເປັນຕົ້ນ ຄ່າຜ່ານທາງ, ໄລຍະທາງ, ການນຳໃຊ້ ແລະ ຂໍ້ມູນອື່ນໆທີ່ຈຳເປັນ;

4. ເສຍພາສີອາກອນ ແລະ ພັນທະອື່ນໃຫ້ລັດ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ;

5. ຕິດຕາມກວດກາ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກ່ຽວກັບທາງດ່ວນ ຕາມການສະເໜີຂອງຜູ້ນຳໃຊ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງສົມເຫດສົມຜົນ;

6. ຄຸ້ມຄອງ, ຕິດຕາມ ກວດກາ, ບູລະນະຮັກສາ ແລະ ສ້ອມແປງໂຄງລ່າງພື້ນຖານທາງດ້ານເຕັກນິກຂອງທາງດ່ວນ ເພື່ອຮັບປະກັນໃຫ້ຢູ່ໃນສະພາບດີຢູ່ຕະຫຼອດເວລາ;

7. ປັບປຸງ, ຍົກລະດັບທາງດ້ານເຕັກໂນໂລຊີ ກ່ຽວກັບການບໍລິການທາງດ່ວນ ໃຫ້ທັນສະໄໝຂຶ້ນເລື້ອຍໆ;

8. ແຈ້ງໂຈະການປິດຊ່ອງຈະລາຈອນ ເພື່ອ ກໍ່ສ້າງ ແລະ ສ້ອມແປງ ທາງດ່ວນ;

9. ກໍ່ສ້າງ ແລະ ຕິດຕັ້ງລະບົບປ້ອງກັນຄວາມປອດໄພ ໃຫ້ຖືກຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ ຄູ່ມືກົດຈະລາຈອນ ຂອງ ສປປ ລາວ ຢ່າງເຂັ້ມງວດ ໂດຍນຳໃຊ້ເຕັກໂນໂລຊີ ທີ່ເໝາະສົມ;

10. ຕິດຕາມ, ເກັບກຳຂໍ້ມູນຈຳນວນພາຫະນະທີ່ນຳໃຊ້ທາງດ່ວນ ແລ້ວລາຍງານໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອເປັນຂໍ້ມູນໃນການຂະຫຍາຍທາງຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ;

11. ສະຫຼຸບລາຍງານການເຄື່ອນໄຫວວຽກງານຂອງຕົນໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຈຳ ເດືອນ, ຫົກເດືອນ ແລະ ປີ ເພື່ອຊາບ.

## ມາດຕາ 40 ຍານພາຫະນະທີ່ຍົກເວັ້ນຄ່າຜ່ານທາງດ່ວນ

ຍານພາຫະນະທີ່ຍົກເວັ້ນຄ່າຜ່ານທາງດ່ວນ ໃນເວລາປະຕິບັດໜ້າທີ່ ມີດັ່ງນີ້:

1. ລົດຕຳຫຼວດຈະລາຈອນທາງດ່ວນ ທີ່ປະຕິບັດໜ້າທີ່ ສຸກເສີນ ແລະ ແກ້ໄຂອຸບປະຕິເຫດ ຕາມທາງດ່ວນ ທີ່ມີເຄື່ອງໝາຍທາງການຕິດຂ້າງລົດ;

2. ລົດ ໂຮງໝໍ, ກູ້ໄພ ແລະ ມອດໄຟ;

3. ຍານພາຫະນະອື່ນທີ່ຜູ້ສຳປະທານເປັນຜູ້ຕົກລົງ.

# ໝວດທີ 9
# ຂໍ້ຫ້າມ

**ມາດຕາ 41 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍ ປ້າຍ, ໄຟສັນຍານ ແລະ ເຄື່ອງໝາຍ ຈະລາຈອນ ລວມທັງສ້າງສິ່ງເປິະເປື້ອນ ແລະ ປິດບັງປ້າຍຈະລາຈອນ ລວມທັງຖົມຮ່ອງລະບາຍນ້ຳແຄມທາງດ່ວນ, ຖົມດິນສູງກວ່າໜ້າທາງດ່ວນ ແລະ ວາງສິ່ງກີດຂວາງຕ່າງໆ, ດັງໄຟ, ຖິ້ມສິ່ງເປິະເປື້ອນໃສ່ໜ້າທາງ, ຮ່ອງລະບາຍນ້ຳ ໃນຂອບເຂດສະຫງວນຂອງທາງດ່ວນ ຫຼື ເຂດປອດໄພອື່ນ;

2. ທຳລາຍ, ມ້າງເພ ພື້ນທາງ, ໜ້າທາງ, ຂົວ, ຮົ້ວ, ອຸໂມງ, ອຸປະກອນຈະລາຈອນ, ສະຖານີເກັບເງິນຄ່າຜ່ານທາງ, ໂຄງປະກອບ, ສິ່ງປະກອບ, ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນ, ຮົ້ວ, ເປີ້ນພູປ້ອງກັນ, ຮ່ອງລະບາຍນ້ຳ, ທໍ່ລອດທາງດ່ວນ, ປ່າປ້ອງກັນ, ພື້ນທີ່ຄ້ອຍກັນເຈື່ອນ ແລະ ສະຖານທີ່ໂຄງການອື່ນໆ;

3. ເຂົ້າຂອບເຂດສະຫງວນທາງດ່ວນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຍ່າງ, ຍູ້ລໍ້ ແລະ ຂີ່ລົດຖີບ ຕາມທາງດ່ວນ;

5. ກໍ່ສ້າງສິ່ງປຸກສ້າງເລື່ອມເອົາຂອບເຂດສະຫງວນຂອງທາງດ່ວນ;

6. ຖິ້ມຂີ້ເຫຍື້ອ, ສິ່ງເປິະເປື້ອນ, ຖອກ ຫຼື ປ່ອຍນ້ຳເປື້ອນ, ນ້ຳມັນ ສານທີ່ເປັນອັນຕະລາຍ, ເຈາະຮູ, ວາງສິ່ງຂອງໜັກ, ຈູດເຜົາສິ່ງຂອງ ຫຼື ສິ່ງເສດເຫຼືອຕ່າງໆ ຢູ່ເທິງໜ້າດິນບ່ອນທີ່ມີສາຍເຄເບີນ ແລະ ສາຍໄຟຟ້າໃຕ້ດິນ ໃສ່ທາງດ່ວນ ແລະ ຂອບເຂດສະຫງວນຂອງທາງດ່ວນ;

7. ຂຸດດິນ, ຖົມດິນ, ກອງດິນ, ກອງວັດສະດຸໃສ່ທາງດ່ວນ ແລະ ແຄມທາງດ່ວນ;

8. ຂຸດ, ຖົມ, ເຈາະ ຫຼື ຖິ້ມສານເຄມີ ທີ່ເປັນອັນຕະລາຍໃສ່ສາຍໄຟຟ້າຕາມທາງດ່ວນ ພາຍໃນໄລຍະຫ່າງ 20 ແມັດ;

9. ຊື້ຂາຍ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງດ່ວນ ເຊັ່ນ ຝາປິດຮູລະບາຍນ້ຳ, ຂຸມພັກນ້ຳ, ຊິ້ນສ່ວນຂົວ, ຫັກປ້າຍສັນຍານ ແລະ ອື່ນໆ;

10. ລ້ຽງ, ປ່ອຍ ແລະ ເຄື່ອນຍ້າຍ ສັດລ້ຽງເຂົ້າໃນຂອບເຂດສະຫງວນຂອງທາງດ່ວນ;

11. ເຄື່ອນຍ້າຍ, ທຳລາຍ ໂຄງປະກອບ, ສິ່ງປະກອບ, ສິ່ງປ້ອງກັນຄວາມປອດໄພ, ອຸປະກອນກໍ່ສ້າງຂອງທາງດ່ວນ, ພ້ອມທັງຕັ້ງປ້າຍໂຄສະນາ ພາຍໃນຂອບເຂດທາງດ່ວນໂດຍບໍ່ໄດ້ຮັບອະນຸຍາດ;

12. ກໍ່ສ້າງ, ປຸກສ້າງ, ປູກຕົ້ນໄມ້ ໃນບໍລິເວນທາງໂຄ້ງຂອງທາງດ່ວນທີ່ອາດຂັດຂວາງຕໍ່ຜູ້ຂັບຂີ່ຍານພາຫະນະ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສຳປະທານ;

13. ແຊກແຊງການຄຸ້ມຄອງກິດຈະການຂອງຜູ້ສຳປະທານ ແລະ ຂັດຂວາງ ການກໍ່ສ້າງ ແລະ ສ້ອມແປງທາງດ່ວນ ພ້ອມທັງເປີດໄມ້ກັ້ນຜ່ານເຂົ້າທາງດ່ວນ, ຜ່າດ່ານ, ທຳຮ້າຍພະນັກງານທາງດ່ວນ, ທຳລາຍສິ່ງອຳນວຍຄວາມສະດວກຂອງທາງດ່ວນ;

14. ສ້າງທາງຂ້າມ ຫຼື ທາງມ້າລາຍເທິງທາງດ່ວນ ແລະ ສ້າງຖະໜົນເຊື່ອມຕໍ່ທາງເທິງທາງດ່ວນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສຳປະທານ;

15. ຕິດຕັ້ງລະບົບ ໄຟຟ້າ, ໂທລະຄົມມະນາຄົມ ແລະ ການສື່ສານຂ້າມທາງດ່ວນ, ວາງສາຍເຄເບີນ, ທໍ່ໃຕ້ດິນ, ຕາມແລວທາງດ່ວນ, ຈຸດຂ້າມທາງດ່ວນ ຫຼື ຢູ່ຕາມທາງດ່ວນ ໃຫ້ປັກຫຼັກໝາຍຕາມອຸໂມງ, ໜອງນ້ຳ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສຳປະທານ;

16. ດູດເອົານ້ຳຈາກພື້ນດິນ, ກັ້ນຂັ້ນແມ່ນ້ຳ, ສ້າງຂົວລອຍນ້ຳ ຫຼື ກໍ່ສ້າງສິ່ງອື່ນໆ ທີ່ອາດຈະສົ່ງຜົນກະທົບຕໍ່ຄວາມປອດໄພຂອງຂົວທາງດ່ວນ;

17. ຖົມດິນເບື້ອງລຸ່ມ ຫຼື ຕັດດິນເບື້ອງເທິງຂອງທາງດ່ວນ ທັງສອງຂ້າງ ຫຼື ທາງນອກຂອງຂືອທາງດ່ວນ ຫຼື ສ້າງໃນພື້ນທີ່ບໍລິການ ແລະ ພື້ນທີ່ອ້ອມຂ້າງ ຫຼື ຢູ່ທັງສອງຂ້າງຂອງເສັ້ນໃຈກາງເທິງອຸໂມງຂອງທາງດ່ວນ;

18. ຜະລິດເຄື່ອງແປຮູບ, ກໍ່ສ້າງສາງເກັບເຄື່ອງ, ຂາຍວັດຖຸໄວໄຟ, ວັດຖຸລະເບີດ, ວັດຖຸກຳມັນຕະພາບລັງສີ, ວັດຖຸອັນຕະລາຍອື່ນໆ ຕາມທາງດ່ວນ;

19. ກໍ່ສ້າງອາຄານ ຫຼື ສິ່ງປຸກສ້າງອື່ນໆ ພາຍໃນລັດສະໝີ 1 ແມັດ ຈາກທັງສອງດ້ານຂອງສາຍເຄເບີນ ແລະ ສາຍໄຟຟ້າໃຕ້ດິນ;

20. ຂຸດແຮ່, ເຈາະຣູ ດຳເນີນກິດຈະການໃດໜຶ່ງ ທີ່ເປັນໄພອັນຕະລາຍຕໍ່ຄວາມປອດໄພຂອງລະບົບໂທລະຄົມມະນາຄົມ ແລະ ການສື່ສານ ແລະ ລະບົບໄຟຟ້າ;

21. ປ່ອຍວ່າວ, ບາລູນ, ປາຣາມໍເຕີ, ໂຄມລອຍ ແລະ ໂດຣນ ໃກ້ສອງຂ້າງທາງດ່ວນ;

22. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 42 ຂໍ້ຫ້າມສຳລັບຜູ້ນຳໃຊ້ທາງດ່ວນ**

ຫ້າມຜູ້ນຳໃຊ້ທາງດ່ວນ ມີພຶດຕິກຳ ດັ່ງນີ້:

1. ຂັບຂີ່ຍານພາຫະນະໃນສະພາບມຶນເມົາ;

2. ຂັບຂີ່ຍານພາຫະນະ ເກີນຄວາມໄວ ທີ່ກົດໝາຍ, ລະບຽບການ ແລະ ປ້າຍຈະລາຈອນ ກຳນົດ;

3. ຂັບຂີ່ພາຫະນະໄວເກີນກຳນົດ, ຂັບຂີ່ເຈີດຊ້າຍເຈີດຂວາ, ຊ່ວງຊີງພາຫະນະອື່ນ ດ້ວຍຄວາມປະໝາດ ແລະ ບໍ່ຖືກຕ້ອງຕາມກົດຈະລາຈອນທາງບົກ;

4. ຂັບຂີ່ຍານພາຫະນະທີ່ບັນທຸກວັດຖຸ ແລະ ສິນຄ້າ ຜິດກົດໝາຍເຂົ້າທາງດ່ວນ ແລະ ເຂດສະຫງວນຂອງທາງດ່ວນ ຢ່າງເດັດຂາດ;

5. ໃຊ້ໂທລະສັບມືຖື, ເບິ່ງໂທລະພາບ, ຮູບພາບ ວີຊີດີ (VCD), ດີວີດີ (DVD) ເຄື່ອງຫຼິ້ນເອເລັກໂຕຣນິກທຸກປະເພດ ໃນເວລາຂັບຂີ່ຍານພາຫະນະ;

6. ຈອດຍານພາຫະນະຕາມທາງດ່ວນໂດຍບໍ່ມີຄວາມຈຳເປັນ;

7. ຍານພາຫະນະທີ່ບັນທຸກຜູ້ໂດຍສານເກີນຈຳນວນ, ສິນຄ້າເກີນນ້ຳໜັກ ຫຼື ຂະໜາດ ຕາມມາດຕະຖານຂອງໂຮງງານຜະລິດ ກຳນົດ;

8. ຜູ້ໂດຍສານນັ່ງກະບະລົດ;

9. ແຂ່ງລົດທຸກປະເພດຕາມທາງດ່ວນ;

10. ຖອຍຫຼັງ, ຂັບສວນກັບ, ຂ້າມຮາວດອນກາງເພື່ອລ້ຽວກັບ;

11. ລອງລົດ ແລະ ລົດທີ່ຮຽນຂັບເຂົ້າທາງດ່ວນ;

12. ຈອດລົດຕັນທາງເຂົ້າທາງດ່ວນ;

13. ຂັບຂີ່ຄວບຊ່ອງຈະລາຈອນ;

14. ຊີງຍານພາຫະນະທາງເບື້ອງຂວາ;

15. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານຂອງລັດ**

ຫ້າມເຈົ້າຫນ້າທີ່ ແລະ ພະນັກງານຂອງລັດ ມີພຶດຕິກຳ ດັ່ງນີ້:

1. ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການ ຂອງຜູ້ສຳປະທານທາງດ່ວນ;

2. ສົມຮູ້ຮ່ວມຄິດ, ຂໍເອົາ, ທວງເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

3. ເມີນເສີຍ ຕໍ່ໜ້າທີ່ຄວາມຮັບຜິດຊອບຂອງຕົນ ແລະ ກົດໜ່ວງຖ່ວງດຶງ ເອກະສານກ່ຽວກັບວຽກງານທາງດ່ວນ;

4. ໃຊ້ອາຈານບຂູ່ ຜູ້ນຳໃຊ້ທາງດ່ວນ ແລະ ຜູ້ຂັບຂີ່ຍານພາຫະນະ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 44 ຂໍ້ຫ້າມສຳລັບຜູ້ສຳປະທານ**

ຫ້າມຜູ້ສຳປະທານ ມີພຶດຕິກຳ ດັ່ງນີ້:

1. ໃຫ້ເຊົ່າ ຫຼື ໂອນທະບຽນວິສະຫະກິດ ຫຼື ໃບສຳປະທານກ່ຽວກັບທາງດ່ວນໃຫ້ແກ່ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ປົດບັງ, ບິດເບືອນ ຂໍ້ມູນກ່ຽວກັບການດຳເນີນງານກິດຈະການທາງດ່ວນ ເປັນຕົ້ນ ທາງດ້ານເຕັກນິກວິຊາການ, ຄຸນນະພາບຂອງທາງດ່ວນ ແລະ ອື່ນໆ;

3. ສວຍໃຊ້ສິດເພື່ອຫາຜົນປະໂຫຍດສ່ວນຕົວ, ສົມຮູ້ຮ່ວມຄິດ ຫຼື ມີການກະທຳອື່ນ ໂດຍບໍ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານທາງດ່ວນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ວຽກງານທາງດ່ວນ

**ມາດຕາ 45 ອົງການຄຸ້ມຄອງ ແລະ ກວດກາ ວຽກງານທາງດ່ວນ**

ກະຊວງໂຍທາທິການ ແລະ ຂົນສົ່ງ ແຕ່ງຕັ້ງ ມອບໝາຍໃຫ້ບັນດາກົມທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບໂດຍກົງຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ກວດກາວຽກງານທາງດ່ວນ ແລະ ເປັນເຈົ້າການປະສານສົມທົບກັບ ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ, ຊຶ່ງປະກອບດ້ວຍພາກສ່ວນຕ່າງໆ ຄື:

1. ກົມຂົວທາງ;
2. ກົມຂົນສົ່ງ;
3. ກົມເຄຫາ ແລະ ຜັງເມືອງ;
4. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
5. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງ ກົມຂົວທາງ**

ກົມຂົວທາງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປຶກສາຫາລືນຳຜູ້ສຳປະທານ ສ້າງ ແລະ ປັບປຸງ ລະບຽບການ ແລະ ມາດຕະການກ່ຽວກັບການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງດ່ວນ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ແລະ ຊີ້ນຳການຈັດຕັ້ງປະຕິບັດ ລະບຽບການ ແລະ ມາດຕະການ ກ່ຽວກັບການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງດ່ວນ;

3. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງດ່ວນ;

4. ຄົ້ນຄວ້າກຳນົດມາດຕະຖານ ໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນ ຕາມທາງດ່ວນ;

5. ປະສານສົມທົບກັບ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ກົມຂົນສົ່ງ**

ກົມຂົນສົ່ງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປຶກສາຫາລືນຳຜູ້ສຳປະທານ ສ້າງ ແລະ ປັບປຸງ ລະບຽບການ ແລະ ມາດຕະການ ກ່ຽວກັບການຈະລາຈອນ, ການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ຕາມທາງດ່ວນ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ແລະ ຊີ້ນຳການຈັດຕັ້ງປະຕິບັດ ລະບຽບການ ແລະ ມາດຕະການ ກ່ຽວກັບການຈະລາຈອນ, ການຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຕາມທາງດ່ວນ;

3. ຮັບ ແລະ ພິຈະລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານ ຈະລາຈອນ, ການຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຕາມທາງດ່ວນ;

4. ຕິດຕາມກວດກາ ການຕິດຕັ້ງ ແລະ ສ້ອມແປງໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍ ຈະລາຈອນຕາມທາງດ່ວນ;

5. ກວດສອບຄວາມປອດໄພໃນການຈະລາຈອນ ລວມທັງກວດກາແກ້ໄຂຈຸດທີ່ມັກເກີດອຸບປະຕິເຫດຕາມທາງດ່ວນ;

6. ປະສານສົມທົບກັບ ຕຳຫຼວດຈະລາຈອນທາງດ່ວນ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ເກີດອຸບປະຕິເຫດຕາມທາງດ່ວນ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງ ກົມເຄຫາ ແລະ ຜັງເມືອງ**

ກົມເຄຫາ ແລະ ຜັງເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປຶກສາຫາລືນຳຜູ້ສຳປະທານ ສ້າງ ແລະ ປັບປຸງ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ກວດກາ ສິ່ງປຸກສ້າງ ຕາມທາງດ່ວນ ແລະ ບໍລິເວນອ້ອມຂ້າງທາງດ່ວນ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ແລະ ຊີ້ນຳການຈັດຕັ້ງປະຕິບັດ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ກວດກາ ສິ່ງປຸກສ້າງ ຕາມທາງດ່ວນ ແລະ ບໍລິເວນອ້ອມຂ້າງທາງດ່ວນ;

3. ຮັບ ແລະ ພິຈະລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງ ແລະ ກວດກາ ສິ່ງປຸກສ້າງ ຕາມທາງດ່ວນ ແລະ ບໍລິເວນອ້ອມຂ້າງທາງດ່ວນ;

4. ຕິດຕາມກວດກາ, ສະເໜີ ສັ່ງໂຈະການປຸກສ້າງ, ຍົກເລີກໃບອະນຸຍາດປຸກສ້າງ ທີ່ມີການລະເມີດລະບຽບການກ່ຽວກັບການປຸກສ້າງ;

5. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ປຸກສ້າງ ຕາມທາງດ່ວນ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານທາງດ່ວນ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລະບຽບການ, ປຶ້ມຄູ່ມື ແລະ ມາດຕະການ ກ່ຽວກັບວຽກງານທາງດ່ວນ;

2. ໂຄສະນາເຜີຍແຜ່ລະບຽບການ, ປຶ້ມຄູ່ມື ແລະ ມາດຕະການ ກ່ຽວກັບວຽກງານທາງດ່ວນ ພາຍໃນແຂວງ, ນະຄອນຫຼວງ;

3. ປະສານສົມທົບກັບ ບໍລິສັດ ຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ ຈຳກັດ ໃນການຄຸ້ມຄອງ, ຕິດຕາມກວດກາ ສະພາບໃນເຂດຂອງທາງດ່ວນ ພາຍໃນແຂວງ, ນະຄອນຫຼວງ;

4. ປະສານສົມທົບກັບ ບໍລິສັດ ຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ ຈຳກັດ ໃນການຕິດຕາມກວດກາ, ປົກປັກຮັກສາ ໄຟສັນຍານ, ປ້າຍ, ເຄື່ອງໝາຍ ຈະລາຈອນ ແລະ ສິ່ງປ້ອງກັນຄວາມປອດໄພ ຕາມທາງດ່ວນ ເພື່ອບໍ່ໃຫ້ຖືກທຳລາຍ ໃນເຂດຂອງທາງດ່ວນ ພາຍໃນແຂວງ, ນະຄອນຫຼວງ;

5. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ລົງກວດກາສະຖານທີ່ເກີດອຸບປະຕິເຫດ ທີ່ມີຄົນບາດເຈັບ ຫຼື ເສຍຊີວິດ;

6. ປະສານສົມທົບ ກັບພະແນກການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລະບຽບການ, ປຶ້ມຄູ່ມື ແລະ ມາດຕະການ ກ່ຽວກັບວຽກງານທາງດ່ວນ;

2. ໂຄສະນາເຜີຍແຜ່ ລະບຽບການ, ປຶ້ມຄູ່ມື ແລະ ມາດຕະການ ກ່ຽວກັບວຽກງານທາງດ່ວນ ພາຍໃນເມືອງ, ເທດສະບານ, ນະຄອນ;

3. ຕິດຕາມກວດກາ, ປົກປັກຮັກສາ ໄຟສັນຍານ, ປ້າຍ, ເຄື່ອງໝາຍ ຈະລາຈອນ ແລະ ສິ່ງປ້ອງກັນຄວາມປອດໄພ ຕາມທາງດ່ວນ ເພື່ອບໍ່ໃຫ້ຖືກທຳລາຍ ໃນເຂດຂອງທາງດ່ວນ ພາຍໃນເມືອງ, ເທດສະບານ, ນະຄອນ;

4. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ລົງກວດກາສະຖານທີ່ເກີດອຸບປະຕິເຫດທີ່ມີຄົນບາດເຈັບ ຫຼື ເສຍຊີວິດ;

5. ປະສານສົມທົບ ກັບຫ້ອງການ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງວຽກງານທາງດ່ວນ ແລະ ຜູ້ສຳປະທານ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 52 ເນື້ອໃນກວດກາ**

ການກວດກາວຽກງານທາງດ່ວນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທາງດ່ວນ;

2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງທາງດ່ວນ;

3. ການປະຕິບັດແຜນງານ, ໂຄງການ ແລະ ກິດຈະການ ກ່ຽວກັບວຽກງານຄຸ້ມຄອງທາງດ່ວນ;

4. ການດຳເນີນກິດຈະການກ່ຽວກັບທາງດ່ວນ.

**ມາດຕາ 53 ຮູບການກວດກາ**

ການກວດກາມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການປະກອບສ່ວນເຂົ້າໃນວຽກງານທາງດ່ວນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດໄວ້.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 56 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຂົວທາງ, ກົມຂົນສົ່ງ, ກົມເຄຫາ ແລະ ຜັງເມືອງ, ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ແລະ ຜູ້ສຳປະທານ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ ກົມນິຕິກຳ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງກວດກາຄືນ ການຈັດຕັ້ງປະຕິບັດຕົວຈິງ ໃນໄລຍະໃດໜຶ່ງ. ຖ້າຫາກເຫັນວ່າມີບັນຫາໃດທີ່ຍັງບໍ່ຄົບຖ້ວນ ຫຼື ບໍ່ສອດຄ່ອງກັບສະພາບຕົວຈິງ ແມ່ນໃຫ້ນຳສະເໜີຕໍ່ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອພິຈາລະນາປັບປຸງຂໍ້ຕົກລົງສະບັບນີ້ຄືນໃໝ່.

**ມາດຕາ 57 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ປອ. ບຸນຈັນ ສິນທະວົງ